ສຳນັກງານ ລຄຂ
ຜູ້ ຮັບ | ເລກທີ 1115
ວັນທີ 18 OCT 2019
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ ເລກທີ: 42 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 16 ຕຸລາ 2019

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 30/09-04/10/2019 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

**I. ວຽກງານການເມືອງແນວຄິດ**

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

**II. ການເຄື່ອນໄຫວວຽກງານວິຊາສະເພາະ**

**1. ສະພາບເສດຖະກິດເງິນຕາສາກົນ**

**1.1 ອັດຕາແລກປ່ຽນສາກົນ**

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 0,46% ເມື່ອທຽບໃສ່ເອີໂຣ ເນື່ອງຈາກເສດຖະກິດຂອງສ. ອາເມລິກາ ອອກມາບໍ່ດີ ເຫັນໄດ້ຈາກຕົວເລກດັດຊະນີພາກອຸດສາຫະກຳໂຮງງານ ປະຈຳເດືອນ 09/2019 ຫຼຸດລົງ ຈາກລະດັບ 49,10 ຈຸດ ມາເປັນ 47,80 ຈຸດ ເມື່ອທຽບໃສ່ເດືອນຜ່ານມາ. ພ້ອມກັນນັ້ນ, ຕົວເລກປະຊາຊົນທີ່ຂໍສະຫວັດດີການວ່າງງານຄັ້ງທຳອິດໃນອາທິດທີ 28/09/2019 ເພີ່ມຂຶ້ນຈາກຈຳນວນ 215.000 ຄົນ ມາເປັນ 219.000 ຄົນ ເມື່ອທຽບໃສ່ອາທິດຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 23-27/09/2019 | ອາທິດນີ້ 30/09-04/10/2019 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,0928 | 1,0979 | -0,46% |
| ເຢນ/ໂດລາ | 107,97 | 106,76 | 1,13% |
| ບາດ/ໂດລາ | 30,640 | 30,440 | 0,66% |
| ເປໂຊ/ໂດລາ | 51,92 | 51,85 | 0,14% |
| ຣູເປັຍ/ໂດລາ | 14.170,00 | 14.140,00 | 0,21% |
| ໂດລາສິງກະໂປ/ໂດລາ | 1,3822 | 1,3794 | 0,20% |
| ຢວນ/ໂດລາ | 7,1278 | 7,1490 | -0,30% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ຫຼຸດລົງ 6,69% ຈາກ 56,47 ໂດລາ/ບາເຣວ ມາເປັນ 52,69 ໂດລາ/ບາເຣວ ເນື່ອງຈາກການສະໜອງນ້ຳມັນຫຼາຍກວ່າຄວາມຕ້ອງການນ້ຳມັນ ເຫັນໄດ້ຈາກຄັງສຳຮອງນ້ຳມັນດິບຂອງ ສ. ອາເມລິກາ ເພີ່ມຂຶ້ນ 3,10 ລ້ານບາເຣວໃນອາທິດທີ 27/09/2019 ຈາກເພີ່ມຂຶ້ນ 2,41 ລ້ານບາເຣວໃນອາທິດຜ່ານມາ. ພ້ອມກັນນັ້ນ, ປະເທດຊາອຸດິອາຣະເບຍຍັງສາມາດກູ້ກຳລັງການຜະລິດນ້ຳມັນດິບກັບຄືນມາ ຢູ່ທີ່ລະດັບ 11,3 ລ້ານບາເຣວ/ວັນໄດ້ສຳເລັດ.
- ລາຄາຄຳ ເພີ່ມຂຶ້ນ 0,94% ຈາກ 1.495,23 ໂດລາ/ອອນ ມາເປັນ 1.509,35 ໂດລາ/ອອນ ເນື່ອງຈາກເງິນໂດລາອ່ອນຄ່າລົງ ເຮັດໃຫ້ນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ.

## 2. ສະພາບເງິນຕາພາຍໃນ

### 2.1 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 09/2019 ຢູ່ໃນລະດັບ 3,92%. ສຳລັບອັດຕາເງິນເຟີ້ໃນເດືອນ 10/2019 ຄາດວ່າຈະຢູ່ໃນລະດັບ 3,91%.

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 1,80% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 19,56%;
- ປະລິມານເງິນ M2 ຫຼຸດລົງ 1,08% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 15,52%.

### 2.3 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,28% ແລະ ແຂງຄ່າຂຶ້ນ 0,31% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 2,92% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 9,16% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 23-27/09/2019 | | | ອາທິດນີ້ 27/09-04/10/2019 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.884,06 | 8.911,99 | 8.898,75 | 8.864,18 | 8.887,43 | 8.873,97 | 0,22% | 0,28% | 0,28% | -2,96% | -2,92% | -2,92% |
| ບາດ | 294,18 | 295,38 | 294,85 | 293,39 | 294,37 | 293,92 | 0,27% | 0,34% | 0,31% | -9,27% | -9,14% | -9,16% |

### 2.4 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (27/09-03/10/2019) ເຫັນວ່າ: ທະນາຄານທຸລະກິດ (ທທກ) ຊື້ເງິນໂດລາສຸດທິ 2,10 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 36,72 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 34,62 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 268,14 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 177,46 ລ້ານບາດ ແລະ ຂາຍເງິນບາດໄດ້ 445,60 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາ ຫຼຸດລົງ 1,83% ແລະ ເງິນບາດ ຫຼຸດລົງ 58,93%;

[1]% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ດັດສົມໃຫ້ ທທກ ໂດຍການຂາຍເງິນໂດລາ ຈຳນວນ 1,13 ລ້ານໂດລາ ແລະ ຂາຍເງິນບາດ ຈຳນວນ 30,44%;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ເປັນເງິນໂດລາ ຈຳນວນ 6,54 ລ້ານໂດລາ ແລະ ເປັນເງິນບາດ ຈຳນວນ 236,39 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ: ບໍ່ມີການເຄື່ອນໄຫວ.

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດກ່ອນ 20-26/09/2019 | | ອາທິດນີ້ 27/09-03/10/2019 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **36,57** | **595,55** | **36,72** | **177,46** | **0,41%** | **-70,20%** |
| - ທ/ຄທຸລະກິດລັດ | 7,34 | 22,00 | 9,17 | 33,00 | 24,93% | 50,00% |
| - ທ/ຄທຸລະກິດອື່ນໆ | 29,23 | 573,55 | 27,55 | 144,46 | -5,75% | -74,81% |
| **2. ການຂາຍເງິນຕາຕ່າງປະເທດ** | **36,10** | **921,66** | **34,62** | **445,60** | **-4,10%** | **-51,65%** |
| - ທ/ຄທຸລະກິດລັດ | 7,99 | 77,47 | 7,35 | 87,53 | -8,01% | 12,99% |
| - ທ/ຄທຸລະກິດອື່ນໆ | 28,11 | 844,19 | 27,27 | 358,07 | -2,99% | -57,58% |
| **ຊື້-ຂາຍສຸດທິ ທທກ** | **0,47** | **-326,11** | **2,10** | **-268,14** | **346,81%** | **-17,78%** |
| - ຜິດດ່ຽງຊື້-ຂາຍ | 1,29% | -54,76% | 5,72% | -151,10% | 343,33% | 175,93% |
| **- ມູນຄ່າການຊື້-ຂາຍ** | **72,67** | **1.517,21** | **71,34** | **623,06** | **-1,83%** | **-58,93%** |
| **3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-0,26** | **-25,37** | **-1,13** | **-30,44** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 0,26 | 25,37 | 1,13 | 30,44 | | |
| **4. ຊື້-ຂາຍລະຫວ່າງ ທທກ ດ້ວຍກັນ** | **0,77** | **62,50** | **6,54** | **236,39** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍ ໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

## 2.5 ການຄຸ້ມຄອງເງິນຕາຕ່າງປະເທດ

ທະນາຄານແຫ່ງ ສປປ ລາວ ໄດ້ມີກະແສເງິນອອກສຸດທິ ຜ່ານລະບົບທະນາຄານປະຈຳອາທິດວັນທີ (27/09-03/10/2019) ຈຳນວນ 52,23 ລ້ານໂດລາ. ໃນນັ້ນ, ກະແສເງິນອອກມີຈຳນວນ 347,33 ລ້ານໂດລາ ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່າສິນຄ້າ ແລະ ບໍລິການ ຈຳນວນ 89,17 ລ້ານໂດລາ, ລາຍຈ່າຍອື່ນໆ ຈຳນວນ 32,55 ລ້ານໂດລາ, ຊຳລະເງິນກູ້ຢືມຂອງພາກລັດຖະບານ 18,67 ລ້ານໂດລາ, ໃຫ້ກູ້ຢືມແກ່ທະນາຄານທຸລະກິດຢູ່ຕ່າງປະເທດ ຈຳນວນ 70 ລ້ານໂດລາ ແລະ ໂອນເງິນຝາກກັບສະຖາບັນການເງິນຢູ່ຕ່າງປະເທດ ຈຳນວນ 133,22 ລ້ານໂດລາ. ສ່ວນກະແສເງິນໄຫຼເຂົ້າ ຈຳນວນ 289,37 ລ້ານໂດລາ ຊຶ່ງສ່ວນໃຫຍ່ແມ່ນຮັບຊຳລະຄ່າສິນຄ້າ ແລະ ບໍລິການ ຈານວນ 53,04 ລ້ານໂດລາ, ຖອນເງິນຝາກຈາກສະຖາບັນການເງິນຢູ່ຕ່າງປະເທດ ຈຳນວນ 127,68 ລ້ານໂດລາ, ເງິນກູ້ຢືມຂອງສະຖາບັນການເງິນ ຈຳນວນ 85,08 ລ້ານໂດລາ ແລະ ລາຍຮັບອື່ນໆ 18,42 ລ້ານໂດລາ.

3. <u>ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ</u>

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 556 ສະບັບ ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ 4 ສະບັບ, ລວມມູນຄ່າໂອນທັງໝົດ 472,42 ຕື້ກີບ, ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 236,49 ຕື້ກີບເທົ່າກັບ 100,23%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (27/9-03/10/2019) ມີທັງໝົດ 4.586 ຄັ້ງ ເພີ່ມຂຶ້ນ 431 ຄັ້ງທຽບໃສ່ອາທິດທີ່ຜ່ານມາ ຊຶ່ງເປັນສະກຸນເງິນກີບທັງໝົດ. ມູນຄ່າການໂອນໃນອາທິດນີ້ມີທັງໝົດ 1.436,09 ຕື້ກີບ ທຽບໃສ່ອາທິດຜ່ານມາເຫັນວ່າ ຫຼຸດລົງ 551,34 ຕື້ກີບ ຫຼື ເທົ່າກັບ 27,74%. ໃນນັ້ນ, ກະຊວງການເງິນມີການໂອນເງິນຈຳນວນ 112 ຄັ້ງ, ລວມມູນຄ່າໂອນທັງໝົດ 46,32 ຕື້ກີບ ເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ ຈຳນວນເງິນ 302,23 ຕື້ກີບ ເທົ່າກັບ 86,71%.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 733,48 ຈຸດ ເພີ່ມຂຶ້ນ ຈາກ 713,80 ຈຸດ ຫຼື ເທົ່າກັບ 2,76% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 319.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,51 ຕື້ກີບ ຫຼຸດລົງ 22,33% ເມື່ອທຽບໃສ່ອາທິດຜ່ານມາ, ໃນນັ້ນເປັນການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດກວມເອົາ 44%. ສາເຫດການເພີ່ມຂຶ້ນຂອງດັດຊະນີ ຕລຊລ ໃນອາທິດນີ້ແມ່ນມາຈາກຫຼຸດລົງຂອງລາຄາຮຸ້ນ SVN, VCL ແລະ BCEL.

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u>

| ບໍລິສັດ | ອາທິດກ່ອນ (20-26/9/2019) | | | ອາທິດນີ້ (27/9-03/10//2019) | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ(ກີບ) | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາ ປ່ຽນແປງ (%) |
| **BCEL** | 324.400 | 1.884.515.000 | 5.600 | 201.800 | 1.148.330.000 | 5.800 | -37,79 | -39,06 | 3,57 |
| **EDL-GEN** | 8.900 | 31.150.000 | 3.400 | 84.000 | 287.545.000 | 3.500 | 843,82 | 823,10 | 2,94 |
| **LWPC** | - | - | 7.150 | - | - | 7.150 | - | - | - |
| **PTL** | 1.200 | 545.500 | 450 | 600 | 268.500 | 445 | -50,00 | -50,78 | -1,11 |
| **SVN** | 1.100 | 2.250.000 | 2.000 | 100 | 210.000 | 2.100 | -90,91 | -90,67 | 5,00 |
| **PCD** | 400 | 396.000 | 990 | 1.400 | 1.512.000 | 1.000 | - | - | 1,01 |
| **LCC** | - | - | 2.100 | - | - | 2.100 | - | - | - |
| **MHTL** | 10.600 | 30.028.000 | 2.780 | 24.600 | 69.926.000 | 2.850 | 132,08 | 132,87 | 2,52 |
| **LAT** | - | - | 800 | 1.400 | 1.120.000 | 800 | - | - | - |
| **VCL** | 500 | 520.000 | 1.000 | 5.100 | 5.105.000 | 1.050 | 920,00 | 881,73 | 5,00 |
| ທັງໝົດ | 347.100 | 1.949.404.500 | | 319.000 | 1.514.016.500 | | -8,10 | -22,33 | |

5. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

**ທຫລ ໄດ້ເຂົ້າຮ່ວມກອງປະຊຸມທີ່ສຳຄັນຕ່າງໆເປັນຕົ້ນ:** ❶ກອງປະຊຸມຄົ້ນຄວ້າວຽກພັດທະນາເຂດຈຸດສຸມໃຈກາງ (ໄຊສົມບູນ); ❷ກອງປະຊຸມກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍວ່າດ້ວຍການລົ້ມລະລາຍຂອງວິສາຫະກິດ (ສະບັບປັບປຸງ); ❸ກອງປະຊຸມສຳມະນາ ພາຍໃຕ້ຫົວຂໍ້ "ສ້າງຄວາມເຂັ້ມແຂງທາງດ້ານນິຕິກຳ ແລະ ຍຸດທະສາດການພັດທະນາເສດຖະກິດ ແລະ ການເງິນແບບເຊື່ອມໂຍງ"; ❹ກອງປະຊຸມສຳມະນາກ່ຽວກັບການສ້າງຕາຕະລາງ Negative List ໃນສັນຍາການຄ້າດ້ານການບໍລິການ; ❺ກອງປະຊຸມສຳມະນາໃນຫົວຂໍ້: ມາດຕະຖານການລາຍງານການເງິນລາວ (LFRS); ❻ກອງປະຊຸມສຳມະນາໃນຫົວຂໍ້: ການສະໜອງຂໍ້ມູນ, ການນຳໃຊ້ ແລະ ເຂົ້າເຖິງຖານຂໍ້ມູນສະຖິຕິ ໂດຍຜ່ານລະບົບການເຜີຍແຜ່ຂໍ້ມູນສະຖິຕິທາງການໂດຍທົ່ວໄປ (e-GDDs); ❼ພິທີລົງນາມໃນບົດບັນທຶກຄວາມເຂົ້າໃຈສອງຝ່າຍ (MoU) ລະຫວ່າງ ທຫລ ແລະ ທະນາຄານແຫ່ງລັດຫວຽດນາມ ທີ່ ສສ. ຫວຽດນາມ ແລະ ❽ກອງປະຊຸມປະຈຳປີໃນຫົວຂໍ້: ຄວາມໂປ່ງໃສ ແລະ ການປະຕິບັດຕາມ ຄັ້ງທີ່ IV ຢູ່ປະເທດ ສິງກະໂປ.

- **ທຫລ ໄດ້ສຳເລັດການຈັດກອງປະຊຸມຈຳນວນໜຶ່ງຄື:** ❶ກອງປະຊຸມຄົ້ນຄວ້າປັບປຸງຮ່າງດຳລັດວ່າດ້ວຍຄັງສຳຮອງເງິນຕາຕ່າງປະເທດ ແລະ ຮ່າງດຳລັດບໍລິສັດຄ້ຳປະກັນສິນເຊື່ອ; ❷ກອງປະຊຸມຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ຄຕຟງ); ❸ກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ແລະ ກົດໝາຍວ່າດ້ວຍລະບົບການຊຳລະໃຫ້ແກ່ທະນາຄານທຸລະກິດຈຳນວນໜຶ່ງ; ❹ກອງປະຊຸມເຜີຍແຜ່ລະບົບລາຍງານການນຳເງິນສົດເຂົ້າ-ອອກ ສປປ ລາວ; ❺ກອງປະຊຸມປຶກສາຫາລືຄົ້ນຄວ້າການກະກຽມກັນສູນເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ ເປັນນິຕິບຸກຄົນ; ❻ກອງປະຊຸມສຳມະນາໃນຫົວຂໍ້: "Fintech ຕໍ່ກັບສະຖາບັນການເງິນ ສປປ ລາວ ໃນປັດຈຸບັນ ແລະ ອະນາຄົດ"; ❼ພິທີເປີດການຊື້-ຂາຍຮຸ້ນເປັນຄັ້ງທຳອິດຢ່າງເປັນທາງການ ແລະ ເປັນບໍລິສັດຈົດທະບຽນທີ 11 ຂອງຕະຫຼາດຫຼັກຊັບລາວ (ຕລຊລ) ແລະ ❽ພິທີມອບໃບຍ້ອງຍໍໃຫ້ແກ່ກົມກອງ ແລະ ບຸກຄົນ ທີ່ມີຜົນງານປະກອບສ່ວນຄົ້ນຄວ້າສ້າງເງື່ອນໄຂໃຫ້ ສປປ ລາວ ອອກຈາກບັນຊີສີເທົາ; ❾ພິທີແຂ່ງຂັນກິລາເປຕັງຮອບຊີງຊະນະເລີດ ເພື່ອສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 51 ປີ ແລະ ❿ພິທີສະເຫຼີມສະຫຼອງວັນຄູແຫ່ງຊາດ ທີ່ໂຮງຮຽນອະນຸບານ ທຫລ ແລະ ສະຖາບັນການທະນາຄານ.

- **ທຫລ ໄດ້ສຳເລັດການຕ້ອນຮັບເຂົ້າຢ້ຽມຂໍ່ານັບ**ທ່ານ ມາກຄ໌ ໂຣແບ, ຫົວໜ້າ ຜູ້ບໍລິຫານໃຫຍ່ BRED International, ປະທານສະພາບໍລິຫານ ທະນາຄານ ລາວ-ຝຣັ່ງ ຈຳກັດ (BFL), ສະມາຊິກສະພາຜູ້ບໍລິຫານ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BCEL, ສະມາຊິກສະພາບໍລິຫານຂອງທະນາຄານ ເອຊີລີດາ ກຳປູເຈຍ.

- **ທຫລ ໄດ້ສຳເລັດວຽກງານວິຊາສະເພາະທີ່ສຳຄັນຈຳນວນໜຶ່ງເປັນຕົ້ນ:** ❶ອອກຂໍ້ຕົກລົງວ່າດ້ວຍ ພັນທະບັດທະນາຄານແຫ່ງ ສປປ ລາວ ແລະ ຂໍ້ຕົກລົງວ່າດ້ວຍພັນທະບັດອອມຊັບເປັນສະກຸນເງິນໂດລາສະຫະລັດ ຂອງທະນາຄານແຫ່ງ ສປປ ລາວ ງວດທີ່ 1 ຄັ້ງວັນທີ 01 ຕຸລາ 2019; ❷ລົງກວດກາບໍລິສັດ ເຊົ່າສິນເຊື່ອປະຈຳປີ 2018 ຈຳນວນ 04 ແຫ່ງຄື: ບໍລິສັດ ເຄທີພີ ເຊົ່າສິນເຊື່ອ, ບໍລິສັດໂຊກດີ ເຊົ່າສິນເຊື່ອ, ບໍລິສັດ ອີອອນ ເຊົ່າສິນເຊື່ອ ແລະ ບໍລິສັດ ສີສົມບັດ ເຊົ່າສິນເຊື່ອ ແລະ ❸ສຳເລັດການລົງຕິດຕາມ ແລະ ກວດກາ ເພື່ອຈັດລຳດັບໃນການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍຢູ່ທະນາຄານຫຸ້ນສ່ວນການຄ້າທະຫານ.

**III. ແຜນວຽກຈຸດສຸມອາທິດຕໍ່ໄປ:**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ຄຸ້ມຄອງອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ. ພ້ອມທັງ, ຕິດຕາມສະພາບລາຄານ້ຳມັນຢູ່ພາຍໃນ ແລະ ສາກົນ, ຄ່າເງິນ ແລະ ເສດຖະກິດຂອງ ສປປ ລາວ ແລະ ລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາຢ່າງໃກ້ຊິດ ພ້ອມທັງສືບຕໍ່ດຳເນີນມາດຕະການບໍລິຫານຕໍ່ຮ້ານແລກປ່ຽນທີ່ບໍ່ປະຕິບັດຕາມລະບຽບການທີ່ວາງອອກ.
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານທີ່ໄດ້ຮັບອະນຸຍາດຈາກ ທຫລ ຕາມແຜນທີ່ກຳນົດໄວ້.
- ສືບຕໍ່ການລົງກວດກາທະນາຄານທຸລະກິດ 02 ແຫ່ງ ປະຈຳປີ 2018 ຫາໄຕມາດ 02 ປີ 2019.
- ສືບຕໍ່ລົງກວດກາ ບໍລິສັດ ເຊົ່າສິນເຊື່ອ ປະຈຳປີ 2018 ຈຳນວນ 04 ແຫ່ງ (ລ້ານຊ້າງ, ສະບາຍດີ, ວຽງຈັນ ແລະ ທະນາຊັບ) ແລະ ສືບຕໍ່ວຽກສະເພາະກ່ຽວກັບການຕິດຕາມກວດກາການແກ້ໄຂບັນຫາຂອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກຈຳນວນ 03 ແຫ່ງ (ເພື່ອການພັດທະນາ, ນິວຕັນ ແລະ ໂຊກໄຊ).

- **ກະກຽມເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະ ພາຍນອກຄື:** ❶ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີປະຈຳເດືອນຕຸລາ 2019; ❷ກອງປະຊຸມປຶກສາຫາລືກ່ຽວກັບການຜັນຂະຫຍາຍຈັດຕັ້ງປະຕິບັດມະຕິຂອງກົມການເມືອງສູນກາງພັກວ່າດ້ວຍການປັບປຸງການແບ່ງຂັ້ນຄຸ້ມຄອງ ເພື່ອສ້າງຄວາມເຂັ້ມແຂງຂອງລະບົບການບໍລິຫານລັດໄລຍະໃໝ່ ແລະ ❸ພິທີເປີດໂຕການບໍລິການຮັບຊຳລະ Wechat Pay ແລະ Alipay.

- **ກະກຽມຈັດກອງປະຊຸມ ແລະ ສຳມະນາຕ່າງໆເປັນຕົ້ນ:** ❶ກອງປະຊຸມລາຍງານຄວາມຄືບໜ້າ ການກະກຽມດຳເນີນກອງປະຊຸມໃຫຍ່ຂອງບັນດາໜ່ວຍພັກ-ຄະນະພັກຮາກຖານ; ❷ກອງປະຊຸມກວດກາຄວາມສອດຄ່ອງຂອງຮ່າງກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ຮ່ວມກັບສະພາແຫ່ງຊາດ; ❸ກອງປະຊຸມຄົ້ນຄວ້າເຮັດວຽກຮ່ວມກັບຄະນະກຳມະທິການແຜນການ, ການເງິນ ແລະ ການກວດສອບຂອງສະພາແຫ່ງຊາດ ແລະ ❹ກອງປະຊຸມທາບທາມຕໍ່ຮ່າງຂໍ້ຕົກລົງຜູ້ໃຫ້ບໍລິການຊຳລະ.

- **ທຫລ ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບການເຂົ້າຢ້ຽມຂໍ່ານັບເອກອັກຄະລັດຖະທູດຍີ່ປຸ່ນ.**

ເຊັນແທນຫົວໜ້າຫ້ອງການ

ຮອງຫົວໜ້າຫ້ອງການ

ສຸກັນ ຈັນທະວົງ